**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ

# ເຕັກນິກການປູກຜັກກະລ່ຳດອກ



ເອກະສານ ປະກອບການຝຶກອົບຮົມ 04:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດໜື້ວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວໜືວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 04 :
# ແນະນຳເຕັກນິກການປູກຜັກກະລໍ່າດອກ

## ສາລະບານ


ກະລໍ່າດອກ (Caulis Flower)........................................................2
ລັກສະນະທົ່ວໄປ ................................................................... 2
ພັນທີ່ໃຊ້ປູກ .........................................................................3
ການກຽມດິນ.........................................................................3
ການປູກ ...............................................................................4
ການບົວລະບັດຮັກສາ ...........................................................5
ການເກັບກ່ຽວ .......................................................................6

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003



## ການປ້ອງກັນ ແລະ ກຳຈັດຫຍ້າ

ຫຍ້າທຸກຊະນິດເປັນຕົວຍາດແຍ່ງອາຫານຈາກພືດທີ່ເຮົາປູກ. ຖ້າມີຫຍ້າຂຶ້ນຕ້ອງກຳຈັດໂດຍໄວ. ບໍ່ດັ່ງນັ້ນຈະລຳບາກ ແລະ ເສັຍຄ່າໃຊ້ຈ່າຍເພີ່ມຂຶ້ນ. ການປ້ອງກັນ ແລະ ກຳຈັດຫຍ້າອາດໃຊ້ແຮງຄົນຫຼືກ ຫຼື ໃຊ້ສານເຄມີກໍໄດ້.

## ການຄຸມດອກ

ເມື່ອດອກມີຂະໜາດເສັ້ນຜ່າສູນກາງ 5 ຫາ 7 ຊຕມ. ຫຼື ດອກໃຫຍ່ຈົນໄດ້ຂະໜາດແລ້ວ ໃຫ້ຮວບໃບທີ່ຊານດອກ 3 ຫາ 4 ໃບເຂົ້າຫາກັນພຽງຫລົມໆ ແລ້ວມັດໄວ້ຈະເຮັດໃຫ້ດອກມີສີຂາວນວນ ເປັນໜ້າບໍລິໂພກ.

## ການເກັບກ່ຽວ

ສຳຫຼັບພັນດໍ ແມ່ນນິຍົມປູກຢູ່ບ້ານເຮົາ ອາຍຸການເກັບກ່ຽວປະມານ 60 ວັນ ຫຼັງຈາກ ຫວ່ານກ້າ. ແຕ່ຖ້າເປັນພັນປີ ຕ້ອງໃຊ້ເວລາເຖິງ 90 ວັນ ຫຼືຫຼາຍກວ່ານີ້ ເລັກນ້ອຍ. ກະລ່ຳດອກຄວນເລືອກເກັບຕອນດອກຍັງອ່ອນ ແຕ່ດອກໃຫຍ່ ຄື: ໜ້າດອກພຽງ ເມື່ອດອກ ຈະພໍເກັບແລ້ວ ໃຫ້ເອົາໃບຄຸມອອກ ຫຼັງຈາກຄຸມດອກ 57 ວັນ ຫຼື ຫຼາຍກວ່ານີ້ກໍສາມາດເກັບກ່ຽວໄດ້. ໃຊ້ມີດຕັດຕົ້ນກະລ່ຳດອກ ໃຫ້ມີສ່ວນຂອງໃບ ບໍລິເວນໃກ້ດອກຕິດມານຳ 2 ຫາ 3 ໃບ ເພື່ອປ້ອງກັນດອກ ເສຍຫາຍ ໃນເວລາຂົນສົ່ງ.

## ການບົວລະບັດຮັກສາ

ຝຸ່ນທີ່ແນະນຳໃຫ້ໃສ່ກັບກະລ່ຳດອກຄືຝຸ່ນ N:P:K ສູດ15 - 15 - 15 ຫຼື 13 - 13 - 21 ຫຼື ສູດອື່ນໆ ທີ່ໃກ້ຄຽງກັນນີ້. ໃສ່ອັດຕາ 300 ຫາ 600 ກລ ຂຶ້ນຢູ່ກັບຄວາມອຸດົມສົມບູນຂອງດິນ. ການໃສ່ຝຸ່ນ ເທື່ອທີ່ 1: ໃສ່ເປັນຝຸ່ນຮອງພື້ນກ່ອນປູກ, ເທື່ອທີ2: ໃສ່ຫຼັງຈາກປູກໄດ້ 30 ຫາ 40 ວັນ ໂຣຍຂ້າງຫ່າງຈາກ ຕົ້ນເລັກໜ້ອຍແລ້ວພວນດິນປົກ.

## ການໃຫ້ນ້ຳ

ເປັນພືດທີ່ຕ້ອງການຄວາມຊຸ່ມຊື່ນ ໃນດິນສູງໃນເວລາການຈະເລີນເຕີບໂຕ. ຄວນຫົດໃຫ້ນ້ຳຢ່າງພຽງພໍ ແລະ ສະໝ່ຳສະເໝີທັງຕອນເຊົ້າ ແລະ ຕອນແລງ.

## ການຄຸມດິນ

(ປົກດິນ) ວັດຖຸທີ່ໃຊ້ໃນການປົກຄຸມດິນຄື: ເຟືອງແຫ້ງ ຫຼື ຫຍ້າແຫ້ງນອກຈາກນັ້ນຍັງ ໃຊ້ອຸປະກອນອື່ນໆ ທີ່ຫາໄດ້ໃນທ້ອງຖິ່ນທີ່ມີລາຄາຖືກການປົກຄຸມດິນຈະເຮັດໃຫ້ດິນສາມາດເກັບ ຮັກສາຄວາມຊຸ່ມຊື່ນໄວ້ໄດ້ດົນ ແລະ ເໝາະສົມແກ່ການຈະເລີນເຕີບໂຕ ທັງເປັນການຈຳກັດຫຍ້າອີກດ້ວຍ.



# ຂໍ້ແນະນຳ ເຕັກນິກການປູກກະລ່ຳດອກ



## ກະລ່ຳດອກ (Caulis Flower)

ກະລ່ຳດອກເປັນພືດຜັກທີ່ເຮົາໃຊ້ບໍລິໂພກພາກສ່ວນລຳຕົ້ນທີ່ຄ້າຍດອກຊຶ່ງມີລັກສະນະເປັນກ້ອນສີຂາວ. ແຕ່ກ່ອນຜັກຊະນິດນີ້ຕ້ອງປູກໃນເຂດໜາວແຕ່ໃນປະຈຸບັນການຄົ້ນຄວ້າ ຈຶ່ງໄດ້ກະລ່ຳດອກພັນໃໝ່ທີ່ສາມາດປູກໄດ້ທັງລະດູແລ້ງ ແລະ ລະດູຝົນແຕ່ໃຫ້ເປັນບ່ອນມີອາກາດໃນເວລາກາງຄືນເຢັນພໍສົມຄວນ.

## ລັກສະນະທົ່ວໄປ

ກະລ່ຳດອກເປັນພືດໃນຕະກຸນ Cruciferae ຊື່ວິທະຍາສາດ: Brassica deracea Var botrytis Linn. ສາມາດຂຶ້ນໄດ້ໃນດິນເກືອບທຸກຊະນິດ. ແຕ່ມັກດິນຮ່ວນປົນຊາຍມີຄວາມເປັນກົດເປັນດ່າງ (pH) 6.5 ຫາ 6.8 ຫຼື ເປັນກົດອ່ອນ. ຕ້ອງການອຸ່ນຫະພູມອາກາດໃນເວລາຈະເລີນເຕີບໂຕປະມານ 24° C.

# ພັນທີ່ໃຊ້ປູກ

ການປູກກະລໍ່າດອກໃຊ້ພັນເອີລີໂນບອນ ຫຼື ພັນອື່ນໆ ທີ່ມີອາຍຸສັ້ນ ເກັບກ່ຽວໄດ້ພາຍໃນ 60 ວັນ. ປະຈຸບັນນີ້ມີເມັດພັນຂາຍທົ່ວໄປປູກກັນໄດ້ຕະຫຼອດປີ.

# ການຕຽມດິນ

## ການຕຽມດິນໜານກ້າ

ໃຫ້ຂຸດ ຫຼື ໄຖເລິກປະມານ 10 ຫາ 25 ຊຕມ. ຕາກດິນໄວ້ປະມານ 5 ຫາ 7 ວັນ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມໃຫ້ຫຼາຍຄືນເຂົ້າກັນໃຫ້ທົ່ວພວນ ແລະ ມອບດິນໃຫ້ລະອຽດຍົກເປັນໜານ.

## ການຕຽມໜານປູກ

ກະລໍ່າດອກ ເປັນພືດທີ່ມີລະບົບຮາກຕື້ນການຕຽມດິນໃຫ້ເລິກປະມານ 15 ຫາ 20 ຊຕມ. ຕາກດິນໄວ້ 7 ຫາ 10 ວັນ ໃສ່ຝຸ່ນບົ່ມ ຫຼື ຝຸ່ນຄອກໃຫ້ຫຼາຍປົນດິນໃຫ້ລະອຽດເກັບຫຍ້າ ແລະເສດໄມ້ອອກໃຫ້ໝົດຍົກເປັນໜານຕຽມປູກຕໍ່ໄປ.



# ການປູກ

## ການກ້າແກ່ນ

ກະລໍ່າດອກ ຕ້ອງກ້າໃຫ້ອອກເປັນຕົ້ນກ້າອາຍຸປະມານ 1 ເດືອນ ແລ້ວຈຶ່ງ ຍ້າຍໄປປູກຢູ່ໜານ. ຫຼັງຈາກຕຽມດິນໜານກ້າ ແລ້ວໃຫ້ຫວ່ານເມັດທົ່ວພື້ນໜານ ແລ້ວຫວ່ານປົກຝຸ່ນຄອກ/ຝຸ່ນບົ່ມ ຫຼືດິນລະອຽດໜາບໍ່ເກີນ 1 ຊຕມ. ຫົດນໍ້າ ໃຫ້ຊຸ່ມ ແລະ ປົກດ້ວຍເຟືອງ ຫຼືຫຍ້າແຫ້ງ. ເມື່ອຕົ້ນກ້າມີໃບແທ້ໃຫ້ຖອນແຍກຕົ້ນທີ່ບໍ່ສົມບູນ ຫຼືຕົ້ນທີ່ບຽດສີກັນອອກພ້ອມທັງຈັດໄລຍະໃຫ້ ຕົ້ນຫ່າງກັນປະມານ 5 ຫາ 10 ຊຕມ.

## ການປູກລົງໜານ

ຫຼັງຈາກຕົນກ້າມີໃບແທ້ ຫຼືອາຍຸປະມານ 30 ວັນ ໃຫ້ຍ້າຍປູກຢູ່ໜານ ໂດຍໃຊ້ໄລຍະຫ່າງຕົ້ນຕໍ່ຕົ້ນ ປະມານ 40 ຊຕມ. ໄລຍະຫ່າງແຖວຕໍ່ແຖວ 60 ຊຕມ. ການປູກໃຫ້ຂຸດຂຸມກວ້າງ 1.5 ຊຕມ. ເລິກ 10 ຊຕມ. ແລ້ວຈຶ່ງນຳຕົ້ນກ້າມາປູກລົງໃນຂຸມຖົມດິນບໍລິເວນຕົ້ນ ໃຫ້ແໜ້ນໃຊ້ເຟືອງ ຫຼືຫຍ້າແຫ້ງປົກຕົ້ນ ຫົດນໍ້າໃຫ້ຊຸ່ມ. ການຍ້າຍເບ້ຍຄວນຍ້າຍຕອນຄ້ອຍບ່າຍ ຫຼືເວລາຟ້າບົດ ຢ່າໃຫ້ຮາກໄດ້ຮັບການກະທົບກະເທືອນ.